**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 03 /ສພທ.ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ 18/03/2019

# ມະຕິ

## ກອງປະຊຸມສະພາບໍລິຫານ ທຄຕລ ສະໄຫມສາມັນ ຄັ້ງທີ 2 ປະຈຳປີ 2019, ວັນທີ 18/03/2019

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄຫມສາມັນ ຄັ້ງທີ 2 ປະຈຳປີ 2019 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 9:10 ໂມງ ຂອງວັນທີ 18/03/2019 ທີ່ ສຳນັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງໃນບັນຫາສຳຄັນຕ່າງໆ ດັ່ງນີ້:**

1. ຮັບຮອງການປັບປຸງບາງຕົວເລກແຜນການທຸລະກິດປະຈຳປີ 2019 ຂອງ ທຄຕລ ເພື່ອເປັນບ່ອນອີງໃນການນຳສະເໜີກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018 ຮັບຮອງຢ່າງເປັນທາງການ.
2. ຮັບຮອງຜົນການກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2018 (ມາດຖານລາວ) ແລະ ເຫັນດີຮັບຮອງວິທີການພິຈາລະນາຜົນການກວດສອບເອກະສານລາຍງານການເງິນປະຈຳປີ 2018 ມາດຖານສາກົນ (IFRS) ຜ່ານທາງຈົດໝາຍວຽນຫຼັງການກວດສອບສຳເລັດ, ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018 ຮັບຮອງ.
3. ຮັບຮອງການຮ່ວມລົງທຶນສ້າງຕັ້ງບໍລິສັດ LAP Net ຂອງ ທຄຕລ ແລະ ເຫັນດີໃຫ້ນຳສະເໜີກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018 ພິຈາລະນາຮັບຮອງ.
4. ຮັບຮອງຕົວເລກປັນຜົນຮຸ້ນ ທຄຕລ ປະຈຳປີ 2018 ຂອງ ທຄຕລ ຈຳນວນ 991 ກີບ/ຮຸ້ນ, ຈ່າຍເງິນປັນຜົນພາຍໃນ 10 ວັນຫຼັງຈາກກອງປະຊຸມຜູ້ຖືຮຸ້ນຮັບຮອງ.
5. ຮັບຮອງການກະກຽມເປີດກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018 ດັ່ງນີ້:
   - ເວລາເປີດກອງປະຊຸມ: 14:30 ໂມງ ຂອງວັນທີ 26 ເມສາ 2019;
   - ສະຖານທີ່ປະຊຸມ: ທີ່ຫ້ອງປະຊຸມ Grand Ballroom ໂຮງແຮມແລນມາກ, ນະຄອນຫຼວງວຽງຈັນ;
   - ຮັບຮອງເອົາຮ່າງບັດເຊີນ ແລະ ວາລະສຳລັບກອງປະຊຸມດັ່ງກ່າວ.

6. ຮັບຮອງໃຫ້ ທຄຕລ ສະໝັກເຂົ້າຮ່ວມເປັນທະນາຄານຕົວແບບໃນການຈັດຕັ້ງປະຕິບັດວຽກງານບາເຊວ.

7. ຮັບຮອງການອອກພັກຜ່ອນຂອງຮອງຜູ້ອຳນວຍການໃຫຍ່ ທຄຕລ ຈຳນວນ 1 ທ່ານ ທີ່ມີຄວາມຈຳເປັນດ້ານສຸຂະພາບ.

ກອງປະຊຸມ ໄດ້ປິດລົງໃນເວລາ 12:00 ໂມງຂອງວັນດຽວກັນ

**ປະທານສະພາບໍລິຫານ ທຄຕລ**



ປອ. ບຸນເຫຼືອ ສິນໄຊວໍຣະວົງ